ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ກົມຄຸ້ມຄອງສະຖາບັນການເງິນ

ເລກທີ 1331 /ກຄສງ

ນະຄອນຫລວງວຽງຈັນ, ວັນທີ 08 OCT 2013

# ແຈ້ງການ

**ເຖິງ:** ຜູ້ອຳນວຍການ ໂຮງຊວດຈຳ

**ເລື່ອງ:** ເພີ່ມທະວີວຽກງານຕ້ານການຟອກເງິນ, ຕ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ການຈັດຕັ້ງປະຕິບັດລະບຽບກົດໝາຍສາກົນທີ່ກ່ຽວຂ້ອງ.

- ອີງຕາມ ກົດໝາຍ ວ່າດ້ວຍທະນາຄານແຫ່ງ ສປປ ລາວ ເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1999;
- ອີງຕາມ ດຳລັດ ວ່າດ້ວຍໂຮງຊວດຈຳ ເລກທີ 10/ນຍ, ລົງວັນທີ 02 ກຸມພາ 2002 ແລະ ບົດແນະນຳກ່ຽວກັບການຈັດຕັ້ງປະຕິບັດ ດຳລັດ ວ່າດ້ວຍໂຮງຊວດຈຳ ເລກທີ 01/ທຫລ, ລົງວັນ 09 ມັງກອນ 2003;
- ອີງຕາມ ດຳລັດ ວ່າດ້ວຍການຕ້ານການຟອກເງິນ ເລກທີ 55/ນຍ, ລົງວັນທີ 27 ມີນາ 2006;

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນປະເທດສະມາຊິກຂອງ ອົງການ ສະຫະປະຊາຊາດ ແລະ ໄດ້ເຂົ້າຮ່ວມໃນຫຼາຍສົນທິສັນຍາສາກົນ ໂດຍສະເພາະໃນຂົງເຂດວຽກງານຕ້ານການຟອກເງິນ ແລະ ຕ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ. ເພື່ອປະຕິບັດບັນດາລະບຽບ ແລະ ກົດໝາຍສາກົນທີ່ກ່ຽວຂ້ອງ ເປັນຕົ້ນແມ່ນບັນຫາທີ່ກ່ຽວຂ້ອງເຖິງຂະແໜງສະຖາບັນການເງິນ ໃຫ້ຖືກຕ້ອງ ແລະ ເຂັ້ມງວດ, ກົມຄຸ້ມຄອງສະຖາບັນການເງິນ ຈຶ່ງແຈ້ງມາຍັງ ໂຮງຊວດຈຳ ທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດຈາກ ທະນາຄານແຫ່ງ ສປປ ລາວ ເພີ່ມທະວີການຈັດຕັ້ງປະຕິບັດວຽກງານຕ້ານການຟອກເງິນ ແລະ ຕ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ດັ່ງນີ້:

1. ເພີ່ມທະວີຄວາມເອົາໃຈໃສ່ໃນການຈັດຕັ້ງປະຕິບັດ ດຳລັດ ວ່າດ້ວຍການຕ້ານການຟອກເງິນ ແລະ ລະບຽບການຈັດຕັ້ງປະຕິບັດດຳລັດດັ່ງກ່າວຢ່າງເຂັ້ມງວດ;
2. ການເປີດບັນຊີ-ປິດບັນຊີໃຫ້ລູກຄ້າ ທີ່ເປັນບຸກຄົນ, ນິຕິບຸກຄົນ ທີ່ຕັ້ງ ຫຼື ບໍ່ຕັ້ງ ຢູ່ ສປປ ລາວ ຕ້ອງເປັນສະກຸນເງິນກີບເທົ່ານັ້ນ ແລະ ປະຕິບັດຕາມລັດຖະບັນຍັດ ວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ວັດຖຸມີຄ່າ ແລະ ລະບຽບກ່ຽວຂ້ອງຢ່າງເຂັ້ມງວດ;

3. ຫ້າມໂຮງຊວດຈຳ ໃຫ້ບໍລິການເປັນເງິນຕາຕ່າງປະເທດ ຫຼື ດຳເນີນທຸລະກຳກັບບຸກຄົນ, ນິຕິບຸກຄົນ ທີ່ຢູ່ໃນບັນຊີດຳຂອງ ອົງການ ສະຫະປະຊາຊາດ ລວມທັງຢູ່ໃນບັນຊີດຳຂອງ ສະຫະລັດອາເມລິກາ ຊຶ່ງມີຊື່ເປັນພາສາອັງກິດແມ່ນ Specially Designated Nationals and Blocked Persons List ຫຼື SDN List, ຕາມເວບໄຊ ລຸ່ມນີ້:

- http:// www.un.org/sc/committees/1267/aq_sanctions_list.shtml
- http:// www.treasury.gov/resource-center/sanctions/SDN-List/Pages/default.aspx

3. ຊອກຮູ້ລະບຽບ ແລະ ກົດໝາຍຂອງສາກົນ ເພື່ອຮັບປະກັນໃຫ້ການດຳເນີນທຸລະກຳກັບຕ່າງປະເທດ ຈັດຕັ້ງປະຕິບັດໄດ້ຢ່າງສອດຄ່ອງ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານ ເພື່ອຮັບຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ຣ. **ຫົວໜ້າກົມຄຸ້ມຄອງສະຖາບັນການເງິນ**

ທະນາຄານ ແຫ່ງ ສປປ ລາວ
ກົມຄຸ້ມຄອງສະຖາບັນການເງິນ

ເກສອນ ມະນີວົງ